# ການຕອບໂຕ້ພະຍາດໂຄວິດ 19

ເຂົ້າເບິ່ງໜ້ານີ້ ເພື່ອອັບເດດຂໍ້ມູນ ແລະ ເຂົ້າເບິ່ງເວັບໄຊ coronavirus.wa.gov ສຳລັບຂໍ້ມູນລ່າສຸດ ຈາກອົງກອນຕ່າງໆທົ່ວລັດ (ພາສາສະເປນ, ພາສາລັດເຊຍ, ພາສາຫວຽດນາມ, ພາສາຈີນ, ພາສາຍີ່ປຸ່ນ, ພາສາເກົາຫລີ, ພາສາພັນຈັບ, ພາສາໂຊມາລີ, ພາສາຢູເຄນ).

## ຕຶກ UTC ປິດໃຫ້ບໍລິການແກ່ປະຊາຊົນ

ຕຶກ UTC ຈະປິດໃຫ້ບໍລິການປະຊາຊົນ ຈົນກວ່າຈະມີໜັງສືແຈ້ງເພີ່ມເຕີມ ແລະ ພະນັກງານ UTC ທັງໝົດຈະເຮັດວຽກຢູ່ບ້ານແທນ.

ຫລາຍໜ່ວຍບໍລິການແມ່ນຈະໃຫ້ບໍລິການຜ່ານເວັບໄຊພວກເຮົາ ແລະ ທ່ານສາມາດໂທຂໍການຊ່ວຍເຫລືອ ແລະ ຍື່ນຄໍາຮ້ອງຮຽນຜູ້ບໍລິໂພກ ທີ່ໝາຍເລກ 1-888-333-WUTC (9882) ຫລື ສົນທະນາອອນລາຍ ແຕ່ເວລາ 8 a.m.- 5 p.m. ວັນຈັນ - ວັນສຸກ. ມີບໍລິການແປພາສາທາງໂທລະສັບ.

## Stay Home, Stay Healthy

ໃນວັນທີ 23 ມີນາ, ຜູ້ວ່າການລັດ. Jay Inslee ໄດ້ອອກຄໍາສັ່ງ Stay at Home, Stay Healthy ແລະ ໃນວັນທີ 1 ພຶດສະພາ ທ່ານໄດ້ຂະຫຍາຍຄໍາສັ່ງ ແລະ ແນະນໍາ 4 ໄລຍະ Safe Start Washington ເພື່ອເປີດເມືອງຄືນ. ເຂດມົນທົນ ທີ່ກໍາລັງກ້າວຜ່ານໄລຍະຕ່າງໆ, ສະນັ້ນ ບໍລິສັດຕ້ອງຮູ້ວ່າ ແນວທາງແນວໃດ ທີ່ຈະນໍາໃຊ້ໃນເຂດມົນທົນທີ່ເຂົາເຈົ້າດໍາເນີນກິດຈະກໍາຢູ່.

- ເພື່ອຊີ້ໃຫ້ເຫັນຢ່າງຊັດເຈນກ່ຽວກັບສະຖານະຂອງທຸລະກິດທ່ານ ຫລື ຮ້ອງຮຽນສໍາລັບທຸລະກິດຂອງທ່ານໃຫ້ຂຶ້ນເປັນບັນຊີ ທຸລະກິດຈໍາເປັນ, ກະລຸນາ ຍື່ນຟອມເອກະສານນີ້ (ສະເພາະພາສາອັງກິດ).

## ການຊ່ວຍເຫລືອຄ່າສາທາລະນູປະໂພກ

ຜູ້ວ່າການລັດ. Inslee ໄດ້ອອກຄໍາສັ່ງຫ້າມບໍ່ໃຫ້ບໍລິສັດພະລັງງານ, ໂທລະສັບສາຍດິນ ແລະ ນໍ້າປະປາ ຢຸດການບໍລິການ ຫລື ເກັບຄ່າທໍານຽມຊ້າຂຶ້ນ ຈົນເຖິງວັນທີ 28 ກໍລະກົດ.

- ບໍລິສັດຈະມີແຫລ່ງເງິນທຶນພ້ອມ ທີ່ຈະຊ່ວຍເຫລືອລູກຄ້າ ຊໍາລະຄ່າສາທາລະນູປະໂພກ.
- ຖ້າທ່ານຕ້ອງການການຊ່ວຍເຫລືອຊໍາລະຄ່າສາທາລະນູປະໂພກ, ທ່ານຄວນຈະຕິດຕໍ່ບໍລິສັດຂອງທ່ານ ຫລື ຕິດຕໍ່ຄະນະກໍາມະການ ທີ່ເບີ 1-888-333-WUTC (9882) ແຕ່ເວລາ 8 a.m. - 5 p.m. ວັນຈັນ-ວັນສຸກ ຫລື ທາງອີເມວ consumer@utc.wa.gov ໃນເວລາໃດໜຶ່ງ.
- ທ່ານຈະຍັງຄົງຕ້ອງໄດ້ຈ່າຍຄ່າຕ່າງໆຂອງທ່ານ ເມື່ອຄໍາສັ່ງຮອດກໍານົດ ສະນັ້ນ ຖ້າທ່ານສາມາດຈ່າຍໄດ້ຕອນນີ້, ທ່ານຄວນຈະ.

## ບໍລິສັດຕາມລະບຽບການ

ພວກເຮົາກໍາລັງເຮັດວຽກໂດຍກົງກັບບໍລິສັດໃຫ້ບໍລິການສາທາລະນູປະໂພກ ແລະ ບໍລິສັດຂົນສົ່ງ UTC ເນື່ອງຈາກເຂົາເຈົ້າໄດ້ດັດປັບນະໂຍບາຍ ແລະ ການດໍາເນີນການຂອງເຂົາເຈົ້າໃນຊ່ວງໄລຍະນີ້.

## ຂໍ້ມູນ ສຳລັບບໍລິສັດຂົນສົ່ງຕ່າງໆ

### Pipeline and Hazardous Materials Safety Administration (PHMSA)

PHMSA ແມ່ນໄດ້ອະນຸຍາດ ໃຫ້ມີການປ່ຽນແປງເງື່ອນໄຂຜູ້ດຳເນີນການເປັນການຊົ່ວຄາວ (ສະເພາະພາສາອັງກິດ) ເພື່ອຊົດເຊີຍຊັບພະຍາກອນທີ່ຈຳກັດ ແລະ ພະນັກງານທີ່ຂາດແຄນ.

- ການຍືດຍຸ່ນຂໍ້ກຳນົດກວດດ້ອຍຢາ,
- ລະງັບການບັງຄັບໃຊ້ເງື່ອນໄຂຜູ້ດຳເນີນການ ແລະ ຂໍ້ກຳນົດຄຸ້ມຄອງຫ້ອງຄວບຄຸມ ເຊັ່ນ ໂມງໃຫ້ບໍລິການ ແລະ ຂໍ້ກຳນົດການເຝິກອົບຮົມສະເພາະ.

### Federal Railroad Association (FRA)

- FRA ໄດ້ອອກຂໍ້ຍົກເວັ້ນສຸກເສີນວ່າ ຖ້າມີການຂາດແຄນສະຖານທີ່ເຮັດວຽກເກີດຂຶ້ນ, ໃຫ້ຢຸດການບັງຄັບໃຊ້ບາງ ຂໍ້ກຳນົດຄວາມປອດໄພ (ສະເພາະພາສາອັງກິດ).
- UTC ຈະຕິດຕາມການຍົກເວັ້ນນີ້ ເມື່ອນຳໃຊ້ອຳນາດບັງຄັບທີ່ຖືກມອບໝາຍຂອງຕົນ.

### ພະນັກງານຂົນສົ່ງສິນຄ້າຄົວເຮືອນ

- ພະນັກງານຂົນສົ່ງສິນຄ້າຄົວເຮືອນ ຕ້ອງໃສ່ຜ້າປິດໜ້າ.
- ສຳລັບເຂດມົນທົນໃນໄລຍະທີ 1, ພະນັກງານຂົນສົ່ງສາມາດເຮັດໄດ້ພຽງແຕ່ຂົນສົ່ງທີ່ຊ່ວຍໃນການເຄື່ອນໄຫວດ້ານອະສັງຫາລິມະຊັບທີ່ປິດ ຫລື ບຸກຄົນທີ່ມີໂອກາດຄວາມສ່ຽງສູງ ທີ່ຍ້າຍອອກຈາກສິ່ງແວດລ້ອມທີ່ບໍ່ປອດໄພ.
- ສຳລັບເຂດມົນທົນໄລຍະທີ 2, ພະນັກງານຂົນສົ່ງສາມາດສືບຕໍ່ກິດຈະກຳໄດ້ທຸກກິດຈະກຳ, ຖ້າເຂົາເຈົ້າສາມາດປະຕິບັດຕາມຂໍ້ກຳນົດດ້ານຄວາມປອດໄພຂອງນາຍຈ້າງ ຈາກ Department of Labor & Industries.

### Federal Motor Carrier Safety Administration (FMSCA)

- FMSCA ໄດ້ຮັບຮອງການຍົກເວັ້ນຂໍ້ກຳນົດໂມງບໍລິການຊົ່ວຄາວ ສຳລັບຍານພາຫະນະການຄ້າ ທີ່ຂົນສົ່ງສິ່ງຂອງບັນເທົາທຸກສຸກເສີນ (ເຊັ່ນ: ອາຫານ, ອຸປະກອນການແພດ ແລະ ອຸປະກອນປ້ອງກັນສ່ວນບຸກຄົນ) ຕາບເທົ່າທີ່ ຄົນຂັບມີເວລາພັກ ຫລັງຈາກສຳເລັດການຂົນສົ່ງ.
- FMSCA ໄດ້ສ້າງລາຍການຄຳຖາມທີ່ຖາມປະຈຳ ກ່ຽວກັບຖະແຫລ່ງການນີ້ ໃນເວັບໄຊຂອງເຂົາເຈົ້າ (ສະເພາະພາສາອັງກິດ).
- FMCSA ໄດ້ສ້າງໜ້າເພຈຂໍ້ມູນ ໂຄໂຣນາໄວຣັສ (ໂຄວິດ 19) (ສະເພາະພາສາອັງກິດ).

### Department of Licensing (DOL)

- Department of Licensing ໄດ້ຂະຫຍາຍວັນໝົດກຳນົດໃບຂັບຂີ່ອອກໄປອີກ ເປັນເວລາ 30 ວັນ.
- ພາຍໃຕ້ແນວທາງຂອງ FMSCA, DOL ກຳລັງຂະຫຍາຍມື້ໝົດກຳນົດ ສຳລັບໃບຂັບຂີ່ຍານພາຫະນະການຄ້າ (CDL) ແລະ ບັດອະນຸຍາດຂັບຂີ່ການຄ້າ (CDP) ກຳນົດໃຫ້ໝົດກຳນົດໃນ ຫລື ຫລັງຈາກທີ 30 ມີນາ ຫາທີ 30 ກັນຍາ.
- ຜູ້ຂັບຂີ່ຍານພາຫະນະການຄ້າ ຄວນຈະຖືສຳເນົາໃບຢັ້ງຢືນທາງການແພດທີ່ໝົດກຳນົດຂອງເຂົາເຈົ້າ ໄປສະແດງໃຫ້ເຫັນວ່າ ມື້ໝົດກຳນົດໃບອະນຸຍາດ ຫລື ການອະນຸຍາດແມ່ນຢູ່ໃນ ຫລື ຫລັງຈາກວັນທີ 30 ມີນາ.

## ກອງປະຊຸມແບບເປີດ, ການໄຕ່ສວນ ແລະ ກອງປະຊຸມສຳມະນາ

ພວກເຮົາຈະຈັດ ກອງປະຊຸມແບບເປີດ, ການຟັງໄຕ່ສວນ ແລະ ກອງປະຊຸມສຳມະນາ ທາງໂທລະສັບ ແລະ ອອນລາຍ. ຖ້າທ່ານກຳລັງວາງແຜນທີ່ຈະເຂົ້າຮ່ວມໃນກອງປະຊຸມຄະນະກຳມະການ, ຮັບປະກັນວ່າ ທ່ານໄດ້ກວດເບິ່ງ ປະຕິທິນ ສຳລັບລາຍລະອຽດຕ່າງໆ.

## ແຫລ່ງຂໍ້ມູນ

- ເວັບໄຊພະຍາດໂຄວິດ 19 ທາງການຂອງລັດວໍຊິງຕັນ (ພາສາສະເປນ, ພາສາລັດເຊຍ, ພາສາຫວຽດນາມ, ພາສາຈີນ, ພາສາຍີ່ປຸ່ນ, ພາສາເກົາຫລີ, ພາສາພັນຈັບ, ພາສາໂຊມາລີ, ພາສາຢູເຄນ).
- Department of Health ເວັບໄຊການແຜ່ລະບາດພະຍາດໃນເວລາ ໂຄໂຣນາໄວຣັສ 2019 (ພາສາສັນຍາລັກອາເມລິກາ (ASL), ພາສາຈີນ, ພາສາຍີ່ປຸ່ນ, ພາສາເກົາຫລີ, ພາສາພັນຈັບ, ພາສາລັດເຊຍ, ພາສາໂຊມາລີ, ພາສາສະເປນ, ພາສາຢູເຄນ, ພາສາຫວຽດ).
- ໂທຫາສາຍດ່ວນພະຍາດໂຄວິດ 19 ທີ່ໝາຍເລກ 1-800-525-0127 ຖ້າທ່ານມີຄຳຖາມ ກ່ຽວກັບສິ່ງທີ່ກຳລັງເກີດຂຶ້ນໃນລັດວໍຊິງຕັນ ຫລື ວິທີທີ່ເຊື້ອພະຍາດໄດ້ລະບາດ. ສາຍໂທລະສັບແມ່ນເລີ່ມແຕ່ເວລາ 6 a.m. ຫາ 10 p.m. ທຸກວັນ.
- ເບິ່ງແນວທາງແນວໃດ ທີ່ຄະນະກຳມະການສາທາລະນູປະໂພກໃນລັດອື່ນໆ ໄດ້ອອກເຜີຍແຜ່, ເຂົ້າຢ້ຽມ NARUC ລະບົບຕິດຕາມການຕອບໂຕ້ຂອງລັດ (ສະເພາະພາສາອັງກິດ).

## ເຂົ້າເຖິງ

ຕ້ອງການຂໍ້ມູນນີ້ ໃນຮູບແບບຕ່າງກັນ? ໂທໝາຍເລກ 1-800-833-6384 ຫລື ກົດ 711 ສຳລັບເນື້ອໃນພິມແບບທາງໄກ (TTY) ຜ່ານບໍລິການຖ່າຍທອດຂອງລັດວໍຊິງຕັນ.

UTC ສາມາດຊ່ວຍທ່ານໄດ້ຜ່ານຫລາຍພາສາ. ກະລຸນາໂທໝາຍເລກ 1-888-333-9882 8 a.m.-5 p.m. ວັນຈັນ - ວັນສຸກ ແລະ ຂໍລາມແປພາສາ.